**SWIS-H**
STATEWIDE INFANT
SCREENING - HEARING



# ເປັນຫຍັງລູກຂ້ອຍຈຶ່ງຖືກສົ່ງໄປ ຮັບການປະເມີນ ດ້ວຍການ ກວດວິໄຈເຣື່ອງການຟັງສຽງ ໂດຍກົງ?

ລູກຂອງທ່ານຈະຖືກສເນີໃຫ້ມີການກວດສຸຂພາບຫຼາຍຢ່າງໃນລະຍະສອງ ສາມອາທິດທີ່ເກີດມາ. ນຶ່ງໃນການກວດເຫຼົ່ານີ້ແມ່ນການກວດເບິ່ງການເສັຍຫູ.

ການກວດເບິ່ງການຟັງສຽງນີ້ຈະມີໃຫ້ໃນທັນທີຫຼັງຈາກເດັກເກີດ. ແຕ່ເຖິງຢ່າງໃດກໍດີ ການ ກວດນີ້ບໍ່ເໝາະສົມກັບເດັກບາງຄົນເພາະ ວ່າການ ກວດນີ້ອາດຈະບໍ່ທ່ຽງຕົງໃນກໍຣະນີເຫຼົ່ານີ້. ບັນດາເດັກເຫຼົ່ານີ້ຈະຖືກສົ່ງໄປ ກວດ ວິໄຈປະເມີນເບິ່ງ ໂດຍກົງໂດຍນັກໂສຕະ ວິທຍາຊຶ່ງເປັນຜູ້ຊ່ຽວຊານໃນ ດ້ານການຟັງສຽງ.

## ເປັນຫຍັງລູກຂ້ອຍຈຶ່ງຖືກແນະນຳສົ່ງໂດຍກົງໄປເ ພື່ອ ການວິໄຈ?

ເຫດຜົນບາງຢ່າງຂອງການແນະນຳສົ່ງໂດຍ ກົງ ຮວມມີ:

- ອາເທຣເຊັຍ(Atresia) (ບໍ່ມີຮູອດຫູ)
- ໄມໂຄຣເຊັຍ(Microtia) (ຫູບໍ່ສົມບູນ ຫຼື ຫູພັທນາບໍ່ເຕັມທີ່)
- ແບັກທີເຣັຍ ຫຼື ເຍື່ອຫຸ້ມສມອງອັກເສບດ້ວຍໄວຣັສ (ຢັ້ງຢືນ ຫຼື ສົງໃສ)
- ສົບແຫວ່ງ/ເພດານປາກແຫວ່ງ
- ປັນຍາອ່ອນ

ບັນດາເດັກທີ່ໃຊ້ເວລາຢູ່ໃນຫ້ອງດູແລພິເສດ ກໍອາດຈະຖືກແນະສຳສົ່ງຕົງໄປເພື່ອ ເຮັດການກວດວິໄຈປະເມີນໂດຍຜູ້ປະ ສານງານຂອງ SWIS-H ຫຼັງຈາກມີການປຶກສາຫາລືກັບກຸມານແພດແລ້ວ ເຖິງແມ່ນວ່າພວກເຂົາຈະໄດ້ຜ່ານການກວດການຟັງສຽງມາແລ້ວກໍຕາມ.

ມີເດັກປະມານນຶ່ງຫາສອງຄົນໃນຈຳນວນ ເດັກ ທຸກໆ1000ຄົນທີ່ເກີດມາຈ ະມີອາການເສັຍຫູ ຢ່າງແຮງ.

ມັນເປັນສິ່ງສຳຄັນທີ່ຕ້ອງຊອກຮູ້ໃຫ້ໄວເທົ່າ ທີ່ໄວໄດ້ວ່າລູກທ່ານໄດ້ຍິນດີ ປານໃດເພື່ອວ່າທ່ານແລະລູກທ່ານສາມາດໄດ້ຮັບຄຳ ແນະນຳທີ່ຖືກຕ້ອງພ້ອມ ທັງການອູ້ມຊູ.

ຖ້າທ່ານຢູ່ໄກຈາກໂຮງໝໍທີ່ທ່ານຖືກແນະ ນຳສົ່ງໄປຫານັ້ນຫຼາຍກວ່າ 100 ກິໂລແມັດ ຈົ່ງສອບຖາມກັບຜູ້ທີ່ເອົາໜັງສືນ້ອຍນີ້ໃຫ້ທ່ານເພື່ອເອົາຂໍ້ມູນກ່ຽ ວກັບໂຄງການຊ່ວຍເຫຼືອດ້ານການເດີນທາງ ຂອງ SWIS-H.

ເພື່ອເອົາຂໍ້ມູນກ່ຽວກັບການວິໄຈປະເມີນໂຣກ ຈົ່ງສອບຖາມກັບຜູ້ທີ່ເອົາໜັງ ສືນ້ອຍນີ້ໃຫ້ທ່ານ ເພື່ອຂໍເອົາໜັງສືນ້ອຍທີ່ຊື່ວ່າ "ເປັນຫຍັງລູກຂ້ອຍຈຶ່ງຕ້ອງ ເຮັດການວິໄຈປະເມີນໂຣກ?"

**ເພື່ອເອົາຂໍ້ມູນເພີ້ມຕື່ມ**
**ກະຣຸນາເຂົ້າຢ້ຽມເບິ່ງເວັບໄຊຕ໌ທີ່ຢູ່ຂ້າງລຸ່ມນີ້:**
http://www.health.nsw.gov.au/kids-families

ການຕິດຕໍ່ໃນທ້ອງຖິ່ນ/ຣາຍລະອຽດຂອງການນັດໝາຍ

ເພື່ອຊອກເອົາຄຳແນະນຳດ້ານສຸຂພາບ ຈົ່ງ ຕິດຕໍ່ *healthdirect Australia*
http://www.healthdirect.gov.au/
**1800 022 222**

NSW GOVERNMENT | Health

Lao - Why has my baby been referred directly for a diagnostic audiology assessment?

© NSW Health September 2016 SHPN (NKF) 150301